**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ເລກທີ 1494 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 14 ພະຈິກ 2021

# ແຈ້ງການ

**ຮຽນ:** - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງທົ່ວປະເທດ ທີ່ນັບຖື.

**ເລື່ອງ:** ການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດ ໂຄວິດ-19 ເລີ່ມແຕ່ວັນທີ 15 ພະຈິກ 2021 ເປັນຕົ້ນໄປ.

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 574/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ຜົນກອງປະຊຸມຮ່ວມ ລະຫວ່າງ ຄະນະສະເພາະກິດ ໂຄວິດ-19 ຂັ້ນສູນກາງ ແລະ ຄະນະສະເພາະກິດ ຂັ້ນແຂວງ ໃນຄັ້ງວັນທີ 10 ພະຈິກ 2021;
- ອີງຕາມການຊີ້ນໍາ ຂອງທ່ານ ຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະສະເພາະກິດ ໂຄວິດ-19 ຂັ້ນສູນກາງ ໃນວັນທີ 14 ພະຈິກ 2021.

ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: **ອີງຕາມການປະເມີນສະພາບການລະບາດ ແລະ ການຈັດຕັ້ງປະຕິບັດມາດຕະການຕ່າງໆ ຕາມທີ່ລະບຸໃນແຈ້ງການ ສະບັບເລກທີ 1402/ຫສນຍ ລົງວັນທີ 31 ຕຸລາ 2021 ແລະ ມາດຕະການຕ່າງໆ ທີ່ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ຂັ້ນສູນກາງ ໄດ້ວາງອອກ ເຫັນວ່າ ໄດ້ຮັບຜົນສໍາເລັດດີ ເປັນກ້າວໆ ຊຶ່ງສະແດງອອກບາງດ້ານທີ່ພົ້ນເດັ່ນ ຄື: ການສັກວັກຊີນ ເຂັມທີ 1 ໄດ້ 3.543.688 ຄົນ, ກວມ 48,29%, ສັກຄົບໂດສ 2.995.667 ຄົນ, ກວມ 40,83%, ປິ່ນປົວຫາຍດີ 43.836 ຄົນ ເທົ່າກັບ 80,89% ຂອງຈໍານວນຜູ້ຕິດເຊື້ອ; ອົງການປົກຄອງ ກໍ່ຄືຄະນະສະເພາະກິດ ທຸກຂັ້ນ ຕະຫຼອດຮອດພະນັກງານແພດໝໍ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທຸກພາກສ່ວນ ສືບຕໍ່ປະຕິບັດໜ້າທີ່ ທີ່ການຈັດຕັ້ງມອບໝາຍໃຫ້ ດ້ວຍຄວາມອົດທົນ ຜ່ານຜ່າ ແລະ ຫ້າວຫັນ; ການຈັດຕັ້ງ ກໍ່ຄື ຄອບຄົວ-ບຸກຄົນ ທຸກພາກສ່ວນ ທຸກຂັ້ນ ສືບຕໍ່ໃຫ້ການສະໜັບສະໜູນ ແລະ ປະກອບເຂົ້າໃນວຽກງານຄວບຄຸມພະຍາດໂຄວິດ-19 ທັງທາງດ້ານວັດຖຸ ແລະ ຈິດໃຈ ຢ່າງເປັນຂະບວນການຟົດຟື້ນ ຄຶກຄື້ນ ຄືສົມຄວນ. ເຖິງຢ່າງໃດກໍ່ຕາມ ສະພາບການຕິດເຊື້ອໃນຊຸມຊົນ ມີຂຶ້ນໃນທຸກແຂວງໃນທົ່ວປະເທດ ແລະ ຈໍານວນຜູ້ຕິດເຊື້ອໃໝ່ ແມ່ນສືບຕໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ຂະຫຍາຍເປັນວົງກວ້າງ, ຊຶ່ງການຕິດເຊື້ອດັ່ງກ່າວ ສ່ວນຫຼາຍແມ່ນເກີດຢູ່ຕາມສະຖານທີ່ທີ່ມີຊຸມຊົນແອອັດຕ່າງໆ ລວມທັງ ຢູ່ໃນງານສັງຄົມ, ສໍານັກງານ-ອົງການ, ຫົວໜ່ວຍທຸລະກິດ ແລະ ລາມໄປຮອດ ການຕິດເຊື້ອກັນໃນຄອບຄົວນັບມື້ຫຼາຍຂຶ້ນ. ສາເຫດຕົ້ນຕໍຂອງການແຜ່ລະບາດດັ່ງກ່າວ ແມ່ນຍ້ອນສັງຄົມຈໍານວນໜຶ່ງ ຍັງບໍ່ທັນປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ. ຍ້ອນແນວນັ້ນ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດມາດຕະການຈໍານວນໜຶ່ງ ເລີ່ມແຕ່ເວລາ 00:00 ໂມງ ຂອງວັນທີ 15 ພະຈິກ 2021 ເປັນຕົ້ນໄປ ຄືດັ່ງນີ້:**

**1. ມາດຕະການລວມ:**

**1.1. ສືບຕໍ່ປິດດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ທາງບົກ ແລະ ທາງນໍ້າ ສໍາລັບບຸກຄົນທົ່ວໄປ,**

ຍົກເວັ້ນ ຜູ້ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງ. ສ່ວນການຂົນສົ່ງສິນຄ້າເຂົ້າອອກ ແມ່ນໃຫ້ປະຕິບັດຕາມທີ່ລະບຸໃນຂໍ້ 3.2 ຂອງແຈ້ງການສະບັບນີ້;

1.2. ສືບຕໍ່ໂຈະການອອກວີຊາທ່ອງທ່ຽວ ແລະ ການມາຢ້ຽມຢາມຕ່າງໆຢູ່ ສປປ ລາວ ໃຫ້ແກ່ຄົນຕ່າງປະເທດ ຍົກເວັ້ນທີ່ໄດ້ຮັບອະນຸຍາດຕາມແຜນທົດລອງນຳເຂົ້ານັກທ່ອງທ່ຽວຕ່າງປະເທດ ຕາມແຈ້ງການສະບັບເລກທີ 1445/ຫສນຍ, ລົງວັນທີ 5 ພະຈິກ 2021. ສຳລັບພະນັກງານສະຖານທູດ, ອົງການຈັດຕັ້ງສາກົນ, ຊ່ຽວຊານ, ນັກລົງທຶນ, ວິຊາການ ແລະ ແຮງງານຕ່າງປະເທດ ທີ່ມີຄວາມຈຳເປັນອັນຮີບດ່ວນ ເພື່ອເຂົ້າມາປະຕິບັດວຽກງານຢູ່ສະຖານທູດ, ບັນດາກິດຈະການ ແລະ ໂຄງການຕ່າງໆ ແມ່ນຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ແລະ ປະຕິບັດຕາມມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ. ສ່ວນການຈຳກັດບໍລິເວນ ແມ່ນອະນຸຍາດໃຫ້ພະນັກງານສະຖານທູດ ແລະ ອົງການຈັດຕັ້ງສາກົນ ນຳໃຊ້ທີ່ພັກຂອງຕົນເອງໄດ້, ນອກນັ້ນ ແມ່ນຕ້ອງໄດ້ຈຳກັດບໍລິເວນຢູ່ໂຮງແຮມ ທີ່ຄະນະສະເພາະກິດ ກຳນົດໄວ້ເທົ່ານັ້ນ;

1.3. ສືບຕໍ່ປິດກິດຈະການຮ້ານບັນເທີງ, ຮ້ານຄາຣາໂອເກະ, ຮ້ານກິນດື່ມ, ຮ້ານອິນເຕີເນັດຄາເຟ, ຮ້ານສະນຸກເກີ, ຄາຊີໂນ ແລະ ຮ້ານເກມທຸກປະເພດ ທົ່ວປະເທດ;

1.4. ຫ້າມຈັດງານ ໂຮມຊຸມນຸມ ຫຼື ຈັດກິດຈະກຳຕ່າງໆ ທີ່ມີຜູ້ເຂົ້າຮ່ວມ ຫຼາຍກວ່າ 50 ຄົນ ເປັນຕົ້ນກິດຈະກຳທາງສາສະໜາ, ງານບຸນປະເພນີ, ງານດອງ; ກໍລະນີຈຳເປັນຕ້ອງຈັດກອງປະຊຸມ ແລະ ງານລ້ຽງທາງການ ແມ່ນໃຫ້ຂໍອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງ ຫຼື ຂັ້ນແຂວງ;

1.5. ຫ້າມຈັດງານສັງສັນ ຫຼື ຊຸມແຊວທຸກຮູບແບບ ຢູ່ທຸກສະຖານທີ່.

2. ມາດຕະການສະເພາະໃນຈຸດທີ່ມີການລະບາດໃນຊຸມຊົນ:

2.1. ສືບຕໍ່ປິດຮ້ານນວດ, ຮ້ານສະປາ, ຮ້ານເສີມຄວາມງາມ, ຮ້ານຕັດຜົມ, ຮ້ານເສີມສວຍ, ໂຮງສາຍຮູບເງົາ, ສວນອາຫານ ແລະ ສະຖານທີ່ທ່ອງທ່ຽວ;

2.2. ປິດສູນກິລາໃນຮົ່ມ ແລະ ກາງແຈ້ງທຸກປະເພດ ລວມທັງ ຫ້າມຈັດການແຂ່ງຂັນກິລາທຸກປະເພດ ແລະ ຫ້າມອອກກຳລັງກາຍຕາມສວນສາທາລະນະຕ່າງໆ;

2.3. ປິດການສັນຈອນຂອງພາຫະນະສ່ວນຕົວ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທີ່ມີການລະບາດໃນຊຸມຊົນ ຕັ້ງແຕ່ເວລາ 23:30 ໂມງ - 05:00 ໂມງເຊົ້າ, ຍົກເວັ້ນລົດຂົນສົ່ງສິນຄ້າ, ສະບຽງອາຫານ, ອຸປະກອນການແພດ, ລົດຂົນສົ່ງຄົນເຈັບ, ລົດດັບເພີງ, ລົດກູ້ໄພ, ລົດຄະນະສະເພາະກິດ, ລົດຂອງເຈົ້າໜ້າທີ່ປະຕິບັດງານ ແລະ ລົດທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ;

2.4. ບັນດາກະຊວງ-ອົງການທຽບເທົ່າ ທີ່ຈະດຳເນີນກອງປະຊຸມໃຫຍ່ ຂອງອົງຄະນະພັກຕົນ ແມ່ນໃຫ້ສະເໜີແຜນປ້ອງກັນ ແລະ ຄວບຄຸມ ພະຍາດໂຄວິດ-19 ໃນໄລຍະດຳເນີນກອງປະຊຸມ ໂດຍບໍ່ຕ້ອງເກັບຕົວຢ່າງກວດຫາເຊື້ອ, ແລ້ວສະເໜີຫາຄະນະສະເພາະກິດ ພິຈາລະນາເປັນແຕ່ລະກໍລະນີ;

2.5. ໃຫ້ບັນດາກະຊວງ, ອົງການທຽບເທົ່າ, ວິສາຫະກິດ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ອະນຸຍາດໃຫ້ພະນັກງານ ແລະ ລັດຖະກອນ ຜັດປ່ຽນກັນມາປະຈຳການ ຫຼື ເຮັດວຽກຢູ່ເຮືອນ ຜ່ານລະບົບເອເລັກໂຕຣນິກ ຕາມສະພາບຕົວຈິງ ແລະ ຄວາມເໝາະສົມຂອງແຕ່ລະສະຖານທີ່. ສຳລັບຜູ້ທີ່ມີຄວາມສ່ຽງ ແລະ ຜູ້ຍິງຖືພາ ທີ່ບໍ່ສາມາດຮັບວັກຊີນໄດ້ ແມ່ນໃຫ້ເຮັດວຽກຢູ່ເຮືອນ.

3. ມາດຕະການຜ່ອນຜັນ :

3.1. ບັນດາຫົວໜ່ວຍທຸລະກິດ, ສະຖານທີ່ ກໍຄືກິດຈະການຕ່າງໆ ທີ່ບໍ່ນອນຢູ່ໃນຂໍ້ 1 ແລະ 2 ແມ່ນອະນຸຍາດໃຫ້ເປີດ ແລະ ດຳເນີນກິດຈະການໄດ້ ໂດຍອີງໃສ່ຜົນຂອງການສັກວັກຊີນຂອງເຈົ້າຂອງກິດຈະການ, ຜູ້ໃຫ້ບໍລິການ ແລະ ຜູ້ເຂົ້າບໍລິການເປັນຕົ້ນຕໍ. ໝາຍວ່າ ຜູ້ໃດສັກວັກຊີນຄົບໂດສ. ແມ່ນສາມາດເຂົ້າໃຊ້

ບໍລິການໃນສະຖານທີ່ດັ່ງກ່າວໄດ້;

3.2. ສືບຕໍ່ອະນຸຍາດໃຫ້ດຳເນີນການຂົນສົ່ງສິນຄ້າພາຍໃນປະເທດ ແລະ ລະຫວ່າງປະເທດ ໂດຍປະຕິບັດຕາມແຈ້ງການຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 242/ຍທຂ, ລົງວັນທີ 23 ເມສາ 2021 ຊຶ່ງຄົນຂັບລົດ ແລະ ຜູ້ຊ່ວຍຄົນຂັບລົດ ພາຍໃນປະເທດ ແລະ ຄົນຂັບລົດຂົນສົ່ງສິນຄ້າເຂົ້າມາ ສປປ ລາວ ຕ້ອງໄດ້ຮັບວັກຊີນຄົບ;

3.3. ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານທາງບົກ, ທາງນ້ຳ ແລະ ທາງອາກາດ ພາຍໃນປະເທດ ໂດຍບໍ່ຈຳເປັນຕ້ອງມີໃບຢັ້ງຢືນຈາກຕົ້ນທາງ ແລະ ປາຍທາງ, ບໍ່ໃຫ້ມີການ ຈຳກັດບໍລິເວນ ແລະ ບໍ່ຈຳກັດເວລາໃນການສັນຈອນຂອງລົດຂົນສົ່ງໂດຍສານ ແລະ ສິນຄ້າ ທຸກປະເພດໃນຂອບເຂດທົ່ວປະເທດ, ແຕ່ໃຫ້ມີການຢັ້ງຢືນການຮັບວັກຊີນຄົບ ທັງຜູ້ໃຫ້ບໍລິການ ແລະ ຜູ້ໂດຍສານ (ຍົກເວັ້ນ ຜູ້ຖືພາ ແລະ ຜູ້ທີ່ບໍ່ທັນເຖິງອາຍຸກະສຽນສັກວັກຊີນ). ນອກຈາກນັ້ນ, ຜູ້ປະກອບການຂົນສົ່ງ ແລະ ຜູ້ໂດຍສານ ຕ້ອງປະຕິບັດມາດຕະການການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢູ່ຕາມສະຖານີ, ພາຫະນະທີ່ນຳໃຊ້ໃນການຂົນສົ່ງ ແລະ ໃນຊ່ວງໄລຍະການເດີນທາງ ຢ່າງເຂັ້ມງວດ;

3.4. ບັນດາຫົວໜ່ວຍທຸລະກິດທຸກປະເພດ ຫາກມີການລະບາດຢູ່ພາຍໃນຫົວໜ່ວຍທຸລະກິດຕົນ ແມ່ນໃຫ້ປິດການດຳເນີນກິດຈະການຊົ່ວຄາວ ເພື່ອອະນາໄມ, ຂ້າເຊື້ອ ແລະ ປະຕິບັດມາດຕະການກັ່ນກອງ, ຄັດແຍກກຸ່ມສ່ຽງຕາມທີ່ຄະນະສະເພາະກິດວາງອອກ, ຈາກນັ້ນ ຈຶ່ງກັບມາເປີດດຳເນີນກິດຈະການຂອງຕົນໄດ້, ຖ້າຫາກຫົວໜ່ວຍ ທຸລະກິດໃດ ບໍ່ປະຕິບັດຕາມມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂສະພາບການລະບາດ ຂອງພະຍາດໂຄວິດ-19 ທີ່ຄະນະສະເພາະກິດຂັ້ນຕ່າງໆວາງອອກ ຕ້ອງໄດ້ດຳເນີນມາດຕະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

- ເພື່ອເປັນບ່ອນອີງໃຫ້ແກ່ການຕິດຕາມ ກວດກາ ຂອງຄະນະສະເພາະກິດກ່ຽວຂ້ອງ ໃຫ້ບັນດາຫົວໜ່ວຍທຸລະກິດ ສ້າງແຜນການປ້ອງກັນການແຜ່ລະບາດ ຂອງພະຍາດ ໂຄວິດ-19 ໃຫ້ລະອຽດ ແລ້ວສົ່ງໃຫ້ຄະນະສະເພາະກິດຂັ້ນທີ່ຕົນເອງເຄື່ອນໄຫວທຸລະ ກິດນັ້ນ ຮັບຊາບ ເພື່ອຕິດຕາມ.

3.5. ອະນຸຍາດໃຫ້ເປີດການຮຽນ-ການສອນທຸກຂັ້ນ ແບບເຊິ່ງໜ້າປົກກະຕິ ຢູ່ນະຄອນຫຼວງວຽງຈັນ, ບັນດາແຂວງທົ່ວປະເທດ. ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ຮີບຮ້ອນສົມທົບກັບ ກະຊວງສາທາລະນະສຸກ ແລະ ພາກສ່ວນທີ່ກ່ຽວຂ້ອງ ກຳນົດເງື່ອນໄຂ ແລະ ມາດຕະການປ້ອງກັນ ແລະ ຄວບຄຸມໃຫ້ລະອຽດ ແລ້ວມອບໃຫ້ຄະນະສະເພາະກິດແຕ່ລະທ້ອງຖິ່ນ ສົມທົບກັບຂະແໜງສຶກສາທິການ ແລະ ກິລາ ອະນຸຍາດເປັນແຕ່ລະກໍລະນີ.

4. ໃຫ້ທຸກຄົນທີ່ອາໃສຢູ່ ສປປ ລາວ ແລະ ບຸກຄົນທີ່ເດີນທາງເຂົ້າມາ ສປປ ລາວ ຕາມການອະນຸມັດຂອງຄະນະສະເພາະກິດຂັ້ນສູນກາງ ດຳເນີນການຕິດຕັ້ງ ແລະ ລົງທະບຽນ ໂປຣແກຣມ (ແອັບ) LaoKYC ໃນໂທລະສັບມືຖືຂອງຕົນ ເພື່ອໃຊ້ບໍລິການ "ລາວ ສູ້ສູ້" ແລະ ສະໝັກສ້າງລະຫັດວັກຊີນ (Vaccine ID) ເພື່ອໃຊ້ເປັນບັດຢັ້ງຢືນການສັກວັກຊີນ ແລະ ສະຖານະຄວາມສ່ຽງຂອງຕົນ ໃນເວລາເຄື່ອນໄຫວ, ເດີນທາງ, ເຂົ້າໄປສຳນັກງານຂອງລັດ, ໂຮງງານ, ຮ້ານຄ້າ, ຮ້ານອາຫານ ແລະ ສະຖານທີ່ຕ່າງໆ;

5. ໃຫ້ບັນດາດ່ານຊາຍແດນ, ຈຸດກວດລະຫວ່າງແຂວງຕໍ່ແຂວງ, ບັນດາສຳນັກງານຂອງລັດ, ໂຮງງານ, ຮ້ານຄ້າ ຮ້ານອາຫານ ແລະ ສະຖານທີ່ບໍລິການຕ່າງໆ ທີ່ອະນຸຍາດໃຫ້ເປີດບໍລິການ ດຳເນີນການຄື: (1) ສ້າງ QR-Code ສະຖານທີ່ຕົນ ຕິດໃສ່ທາງເຂົ້າ, ໂຕະປະຊຸມ ຫຼື ຈຸດທີ່ເປັນບ່ອນຊຸມນຸມ ເພື່ອໃຫ້ຜູ້ເດີນທາງເຂົ້າ-ອອກ ແລະ ຜູ້ໃຊ້ບໍລິການ ໄດ້ສະແກນ QR-Code ເພື່ອແຈ້ງເຂົ້າ (Check-in) ແລະ ກ່ອນເຂົ້າໃຊ້ບໍລິການ; (2) ມີພະນັກງານອຳນວຍຄວາມສະດວກ, ແນະນຳການນຳໃຊ້, ພ້ອມທັງນຳໃຊ້ແອັບກວດບັດຂຽວ (iVerifier) ສະແກນ QR-Code

ລະຫັດວັກຊີນ ຂອງຜູ້ເຂົ້າມາໃຊ້ບໍລິການທຸກຄັ້ງ ເພື່ອຕິດຕາມ ແລະ ພິຈາລະນາອະນຸຍາດ ຫຼື ບໍ່ອະນຸຍາດ ໃຫ້ຜ່ານ ຫຼື ເຂົ້າ-ອອກສະຖານທີ່;

6. ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ລະເມີດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດໂຄວິດ-19 ທີ່ລັດຖະບານ ກໍຄືຄະນະສະເພາະກິດແຕ່ລະຂັ້ນ ວາງອອກ ຕ້ອງຖືກດໍາເນີນມາດຕະການຕ່າງໆ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຢ່າງເຂັ້ມງວດ ແລະ ຕາມກໍລະນີໜັກ ຫຼື ເບົາ;

7. ມອບໃຫ້ຄະນະສະເພາະກິດໂຄວິດ-19 ຂັ້ນສູນກາງ ເປັນເຈົ້າການໃນການຊີ້ນໍາ, ແນະນໍາທາງດ້ານເນື້ອໃນ ກໍຄື ວິທີການໃນການຖະແຫຼງຂ່າວປະຈໍາວັນໃຫ້ຫຼາກຫຼາຍ ເຂົ້າໃຈງ່າຍ, ເພື່ອໃຫ້ສັງຄົມ ຮັບຮູ້ ເຂົ້າໃຈຢ່າງທົ່ວເຖິງ, ມີສະຕິລະວັງຕົວ ແລະ ເປັນເຈົ້າການເຂົ້າຮ່ວມການປະຕິບັດບັນດາມາດຕະການຕ່າງໆ ທີ່ຄະນະສະເພາະກິດແຕ່ລະຂັ້ນ ວາງອອກ;

8. ມອບໃຫ້ຄະນະສະເພາະກິດໂຄວິດ-19 ແຕ່ລະຂັ້ນ ສືບຕໍ່ຊີ້ນໍາພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ວຽກງານຈໍານວນໜຶ່ງ ດັ່ງນີ້:

8.1. ສືບຕໍ່ຊີ້ນໍາ ພາກສ່ວນກ່ຽວຂ້ອງ ໂຄສະນາ, ເຜີຍແຜ່ ແລະ ປຸກລະດົມ ໃຫ້ປະຊາຊົນ ແລະ ຜູ້ປະກອບການ ເຂົ້າໃຈ ແລະ ມີສ່ວນຮ່ວມໃນການປະຕິບັດມາດຕະການຕ່າງໆ ທີ່ລັດຖະບານ ແລະ ອົງການທ້ອງຖິ່ນວາງອອກຢ່າງເຄັ່ງຄັດ, ຄຽງຄູ່ກັນນັ້ນ ກໍໃຫ້ພະຍາຍາມອະທິບາຍໃຫ້ປະຊາຊົນບັນດາເຜົ່າ ມີວິທີການປ້ອງກັນຕົນເອງ ທັງຮຽນຮູ້ການດໍາລົງຊີວິດແບບປົກກະຕິໃໝ່ ໃນເງື່ອນໄຂທີ່ມີການລະບາດ ຂອງພະຍາດໂຄວິດ-19 ຫຼື ເວົ້າອີກຢ່າງໜຶ່ງ ແມ່ນຮຽນຮູ້ທີ່ຈະຢູ່ຮ່ວມກັບພະຍາດໂຄວິດ-19 ໂດຍຜ່ານສື່ຕ່າງໆ (ໂທລະພາບ, ວິທະຍຸ, ໂທລະໂຄ່ງ, ໜັງສືພິມ ແລະ ສື່ສັງຄົມອອນລາຍອື່ນໆ). ພ້ອມທັງປະສານສົມທົບກັບພາກສ່ວນຕ່າງໆ ເພື່ອປະເມີນສະພາບການຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ຖ້າມີຄວາມຈໍາເປັນ ກໍຕ້ອງໄດ້ສະເໜີຂໍການສະໜັບສະໜູນເອົາອາສາສະໝັກ ຈາກອົງການຈັດຕັ້ງຕ່າງໆ ໂດຍສະເພາະແມ່ນ ກໍາລັງຊາວໜຸ່ມ ເພື່ອປະກອບສ່ວນເຂົ້າໃນວຽກງານນີ້ຢ່າງທັນການ ແລະ ຮັບປະກັນຄວາມສະຫງົບປອດໄພ;

8.2. ສືບຕໍ່ກະກຽມສູນກັກກັນ ແລະ ສູນປິ່ນປົວໃຫ້ພຽງພໍ ຕິດພັນກັບກະກຽມງົບປະມານສໍາຮອງໄວ້ ເພື່ອຊື້ອຸປະກອນການແພດ, ວັກຊີນ, ຢາປົວພະຍາດ, ນໍ້າຢາກວດຫາເຊື້ອ ແລະ ອຸປະກອນຈໍາເປັນຕ່າງໆ, ພ້ອມທັງປະຕິບັດນະໂຍບາຍ ໃຫ້ພະນັກງານແພດໝໍ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ພວມປະຕິບັດໜ້າທີ່ວຽກງານດັ່ງກ່າວ ທັງໃຫ້ກໍາລັງໃຈ ດ້ວຍຮູບການຕ່າງໆ. ໃນເວລາຈັດຕັ້ງປະຕິບັດວຽກງານຕົວຈິງ, ຖ້າມີບັນຫາຫຍຸ້ງຍາກ ຄະນະສະເພາະກິດ ກໍຄື ການຈັດຕັ້ງກ່ຽວຂ້ອງບ່ອນນັ້ນໆ ຮີບຮ້ອນປະສານກັບພາກສ່ວນກ່ຽວຂ້ອງ ແລະ ໃຫ້ແກ້ໄຂທັນການ;

8.3. ສືບຕໍ່ຂະຫຍາຍຮູບແບບເອົາໂຮງແຮມເປັນສະຖານທີ່ປິ່ນປົວ ແລະ ສະຖານທີ່ປິ່ນປົວກັບທີ່ສໍາລັບຜູ້ຕິດເຊື້ອທີ່ບໍ່ສະແດງອາການ ແລະ ມີເງື່ອນໄຂທາງດ້ານເສດຖະກິດ ຄອບຄົວ. ຜູ້ຕິດເຊື້ອທີ່ບໍ່ມີອາການ ຫຼື ມີອາການເບົາບາງ ທັງມີເງື່ອນໄຂທາງດ້ານສະຖານທີ່ຂອງຄອບຄົວ ຫຼື ກົມກອງຕ່າງໆ ແມ່ນສາມາດປິ່ນປົວຢູ່ກັບທີ່ໄດ້ ໂດຍຕ້ອງປະຕິບັດຕາມຄູ່ມືແນະນໍາ ທີ່ກະຊວງສາທາລະນະສຸກ ວາງອອກຢ່າງເຂັ້ມງວດ;

8.4. ໃຫ້ສືບຕໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃນການລະດົມຊ່າງຊ່ານ, ແພດໝໍ ແລະ ເຈົ້າໜ້າທີ່ວິຊາສະເພາະດ້ານຕ່າງໆ ເພື່ອຊ່ວຍຮັບມືກັບການລະບາດ ຂອງພະຍາດດັ່ງກ່າວ ຕາມເງື່ອນໄຂຕົວຈິງ ຂອງແຕ່ລະທ້ອງຖິ່ນ.

**9. ໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ ຊີ້ນຳພາກສ່ວນກ່ຽວຂ້ອງຂັ້ນຕົ້ນ ສືບຕໍ່ເລັ່ງການສັກວັກຊີນໃຫ້ເປົ້າໝາຍຕ່າງໆ ຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 24/ນຍ, ລົງວັນທີ 10 ພະຈິກ 2021 ວ່າດ້ວຍການເພີ່ມທະວີສັກວັກຊີນກັນພະຍາດໂຄວິດ-19;**

**10. ລັດຖະບານ ຮຽກຮ້ອງໃຫ້ພະນັກງານ, ນັກຮົບ, ປະຊາຊົນລາວບັນດາເຜົ່າ, ທຸກຊັ້ນຄົນຕະຫຼອດຮອດຊາວຕ່າງປະເທດ ທີ່ພວມປະຕິບັດໜ້າທີ່ ກໍຄືດຳລົງຊີວິດ ຢູ່ ສປປ ລາວ ຈົ່ງສືບຕໍ່ຮ່ວມແຮງຮ່ວມໃຈກັນ ປະຕິບັດມາດຕະການທີ່ຄະນະສະເພາະກິດແຕ່ລະຂັ້ນ ວາງອອກຢ່າງເຂັ້ມງວດດ້ວຍການເປັນຫູເປັນຕາ ຕິດຕາມສະພາບການຕ່າງໆ ໃນກໍລະນີພົບເຫັນມີຜູ້ລັກລອບເຂົ້າເມືອງ ແລະ ມີການລະເມີດມາດຕະການຕ່າງໆ ທີ່ຄະນະສະເພາະກິດວາງອອກ ກໍໃຫ້ຮີບຮ້ອນລາຍງານຕໍ່ຄະນະສະເພາະກິດ ກໍຄືອົງການປົກຄອງທ້ອງຖິ່ນໃນຂັ້ນນັ້ນ ໂດຍໄວ ເພື່ອໃຫ້ການ ຈັດຕັ້ງກ່ຽວຂ້ອງດັ່ງກ່າວ ມີວິທີການແກ້ໄຂ ໃຫ້ທັນການ;**

**11. ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ຄະນະສະເພາະກິດທຸກຂັ້ນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ລັດຖະມົນຕີ,**
**ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ**

ຄຳເຈນ ວົງໄພສີ

<u>ບ່ອນນຳສົ່ງ:</u>

| | | |
|---|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | | 04 ສະບັບ |
| 2. ອົງການຊີ້ນຳເຂດ ພັກ-ລັດ | ບ່ອນລະ | 01 ສະບັບ |
| 3. ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ | ບ່ອນລະ | 01 ສະບັບ |
| 4. ຄະນະເລຂາທິການສະພາແຫ່ງຊາດ | | 01 ສະບັບ |
| 5. ຄະນະ ຫສນຍ, ທ່ານລະ | | 01 ສະບັບ |
| 6. ສຳເນົາ | | 01 ສະບັບ |